PLACE STAMP HERE

NAME

ADDRESS

CITY/STATE/ZIP

DEPARTMENT OF SOCIAL & HEALTH SVCS
DIVISION OF CHILD SUPPORT
PO BOX 11520
TACOMA WA 98411-5520

## ຣາຍລະອຽດສ່ວນຕົວຂອງຂ້າພະເຈົ້າຈະຖືກແລກປ່ຽນນຳອີກ ຝ່າຍນຶ່ງບໍ່?

ພະແນກ DCS ຫລື ທະນາຍຄວາມຜູ້ພິພາກສາອາດຈະແລກປ່ຽນເອກ ສານຕ່າງໆທີ່ທ່ານເອົາໃຫ້ພວກເຮົາ ນຳອີກຝ່າຍນຶ່ງ ແລະ ອາດຈະຍື່ນ ເອກສານໃສ່ຢູ່ໃນສຳນວນເອກສານຂອງສານທີ່ເປັນສາທາຣະນະຊົນ.

ຖ້າຫາກວ່າທ່ານຂໍເອົາການດັດແປງ, ພໍ່ແມ່ອີກຝ່າຍນຶ່ງມີສິດທີ່ຈະເບິ່ງ ຣາຍລະອຽດດ້ານການເງິນຂອງທ່ານ ແລະ ຣາຍລະອຽດແນວອື່ນຕ່າງໆ ທີ່ທ່ານຕ້ອງການໃຫ້ສານທີ່ຈະພິຈາຣະນາເບິ່ງ. ທ່ານສາມາດເອົາຣາຍ ລະອຽດສ່ວນຕົວຂອງທ່ານອອກ (ທີ່ຢູ່, ວັນເກີດ, ເລກໂຊໂຊ) ຈາກເອກ ສານກ່ອນທີ່ທ່ານຈະເອົາໃຫ້ພວກເຮົາ.

ພະແນກ DCS ອາດຈະແລກປ່ຽນຣາຍລະອຽດໄດ້ອີກຄືກັນນຳອົງການ ຂອງຣັດ ຫລື ຣັຖບານສຳລັບຈຸດປະ ສົງຂອງການກໍ່ຕັ້ງ, ດັດແປງ ຫລື ບັງ ຄັບເກັບເງິນລ້ຽງລູກ. ພະແນກ DCS ຈະເປີດເຜີຍຣາຍລະອຽດພຽງ ແຕ່ຕາມທີ່ກົດໝາຍ ແລະ ກົດຣະບຽບຂອງຣັດ ແລະ ຣັຖບານອະນຸຍາດ ໃຫ້ເທົ່ານັ້ນ.

ທ່ານຕ້ອງມີສຳນວນເງິນລ້ຽງລູກເປີດຢູ່ (ການບໍຣິການເຕັມທີ່) ນຳພະ ແນກ DCS ເພື່ອວ່າຈະໄດ້ຮັບຄວາມ ຊ່ວຍເຫລືອຂອງພວກເຮົານຳວິທີ ການດັດແປງ. ເພື່ອຈະເປີດສຳນວນ, ໂທໄປຫາ ຫລື ສົ່ງໃບຟອມທີ່ຖືກຕິດ ມມານຳຂ້າງຫລັງຂອງປຶ້ມຄູ່ມືຫົວນີ້,ຫລື ເຂົ້າເບິ່ງແວບໄຊທ໌ທີ່: www.dshs.wa.gov/dcs.

- ຂໍເອົາໃບຄຳຮ້ອງສຳລັບການບໍຣິການ.
- ຂໍໃຫ້ພະແນກ DCS ທີ່ຈະກວດເບິ່ງຄຳສັ່ງຂອງທ່ານຄືນເພື່ອການ ດັດແປງ.

## ຂ້າພະເຈົ້າຕ້ອງໄດ້ເຂົ້າຮ່ວມໃນການກວດເບິ່ງການດັດແປງຄືນ ຫລື ການດຳເນີນການດັດແປງ ຫລື ບໍ່?

ຖ້າຫາກວ່າທ່ານໄດ້ຮັບເງິນ TANF ຢູ່ ແລະ ຢ້ານກົວວ່າການດຳເນີນ ການກວດເບິ່ງຄືນ ຫລື ການດຳ ເນີນການດັດແປງອາດຈະເປັນອັນຕະ ຣາຍສຳລັບທ່ານ ຫລື ເດັກນ້ອຍຢູ່ໃນຄອບຄົວຂອງທ່ານ, ທ່ານຄວນ ຈະ ຕິດຕໍ່ໄປຫາ Community Services Division (CSD) ເພື່ອ ຈະຮຽກຮ້ອງເອົາເຫດ ຜົນດີທີ່ບໍ່ໄດ້ຮ່ວມມືນຳພະແນກເກັບເງິນລ້ຽງລູກ. ຖ້າຫາກວ່າເຫດຜົນລະດັບ A ໄດ້ຖືກອະນຸມັດ, ພະແນກ DCS ຈະປິດ ເອກສານຂອງທ່ານ. ຖ້າຫາກວ່າການກະທຳດັດແປງໄດ້ຖືກຍື່ນຂຶ້ນນຳ ສານແລ້ວ, ມັນ ອາດຈະຊ້າເກີນໄປແລ້ວທີ່ຈະຢຸດມັນ.

ຖ້າຫາກວ່າທ່ານບໍ່ໄດ້ຮັບເງິນ TANF ຢູ່, ທ່ານຈະຮ້ອງຂໍໃຫ້ພະແນກ DCS ໃຫ້ປິດເອກສານຂອງທ່ານ, ແຕ່ວ່າພໍ່ແມ່ອີກຄົນນຶ່ງອາດຈະຮ້ອງ ຂໍເອົາການບໍຣິການຂອງ DCS.

ເພື່ອຣາຍຣະອຽດເພີ້ມເຕີມ, ເວົ້າລົມນຳ DCS, CSD ຫລື ໂຄງການ ຄວາມຮຸນແຮງໃນຄອບຄົວທ້ອງຖິ່ນ ຂອງທ່ານ. ທ່ານສາມາດພົບເຫັນ ຣາຍຣະອຽດທາງອອນລາຍນ໌ທີ່ www.wscadv.org.

ໂທຫາຫ້ອງການ DCS ໃກ້ບ້ານທ່ານຫລືໂທຫາ 800-442-KIDS (5437) ເພື່ອຈະຊອກຫາ ຫ້ອງການທີ່ກຳເອກສານຂອງທ່ານ.

### ຫ້ອງການ DCS

| | |
|---|---|
| Everett | 800-729-7580<br>425-438-4800 |
| Kennewick | 800-345-9981<br>509-374-2000 |
| Olympia | 800-345-9964<br>360-664-6900 |
| Seattle | 800-526-8658<br>206-341-7000 |
| Spokane | 800-345-9982<br>509-363-5000 |
| Tacoma | 800-345-9976<br>253-597-3700 |
| Vancouver | 800-345-9984<br>360-696-6100 |
| Wenatchee | 800-535-1113<br>509-886-6800 |
| Yakima | 800-441-0859<br>509-249-6000 |
| ສຳນັກງານໃຫຍ່ | 800-457-6202<br>360-664-5000 |

ໂຄງການການອູ້ມຊູເດັກນ້ອຍຂອງຣັດວໍຊິງຕັນ



# ການປ່ຽນແປງ ຄຳສັ່ງຈ່າຍ ເງິນລ້ຽງລູກ

## ການກວດເບິ່ງຄືນ ແລະ ການດັດແປງ

ຄຳສັ່ງຈ່າຍເງິນລ້ຽງລູກອາດຈະບໍ່ທັນກັບການປ່ຽນແປງຢູ່ໃນຊີວິດຂອງ ພໍ່ແມ່ ແລະ ລູກຂອງເຂົາເຈົ້າສະເມີໄປ. ການປ່ຽນແປງຄຳສັ່ງຈ່າຍເງິນ ລ້ຽງລູກໄດ້ຖືກເອີ້ນວ່າການດັດແປງ. ພະແນກ DSHS Division of Child Support (DCS) ອາດຈະສາມາດຊ່ວຍເຫລືອທ່ານ ໄດ້ ນຳການດັດແປງຄຳສັ່ງຂອງທ່ານ.

Washington State Department of Social & Health Services
Transforming lives

